ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 06 ຫາ 10 ພະຈິກ 2023



## ສະພາບປັດຈຸບັນ ຂອງກະສິກຳ ເພື່ອສຸຂະພາບ ແລະ ຂໍ້ແນະນຳຕໍ່ການພັດທະນາ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ສະພາບປັດຈຸບັນ ຂອງກະສິກຳ ເພື່ອສຸຂະພາບ ແລະ ຂໍ້ແນະນຳຕໍ່ການພັດທະນາ

ໂດຍ: 庄奕福（ຈ່ວງອີ້ຟ）[1]，庄明川（ຈ່ວງໝິງຊວນ）[1]，ວັນນະແສງ ພຸດທະປານ [2]

ສະພາບປັດຈຸບັນ ຂອງກະສິກຳເພື່ອສຸຂະພາບ ແລະ ຂໍ້ແນະນຳຕໍ່ການພັດທະນາ (Functional agriculture development status and development suggestions) ແມ່ນໜຶ່ງໃນໂຄງການຄົ້ນຄວ້າຮ່ວມມືທີ່ສຳເລັດໃນປີ 2022, ໂດຍທີມງານຄົ້ນຄວ້າຂອງ ທ່ານ ຈ່ວງອີ້ຟູ (庄奕福), ທ່ານ ຈ່ວງໝິງຊວນ (庄明川) ບໍລິສັດກວາງຊີຣຸ້ຍຄ່າງເຕັກໂນໂລຊີຊີວະພາບຈຳກັດ, ນານນິງ, ກວາງຊີ, ສປ. ຈີນ ທ່ານ ປອ. ວັນນະແສງ ພຸດທະປານ ຮອງຫົວໜ້າສູນຜະລິດຢາສັດຕະວະແພດ ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້, ສປປ ລາວ ເພື່ອເປັນຂໍ້ມູນໃຫ້ນັກຄົ້ນຄວ້າ, ນັກສຶກສາ, ນັກວິຊາການ, ຜູ້ປະກອບການ ແລະ ປະຊາຊົນຜູ້ທີ່ມີຄວາມສົນໃຈ ສະພາບປັດຈຸບັນຂອງກະສິກຳເພື່ອສຸຂະພາບ ແລະ ຂໍ້ແນະນຳຕໍ່ການພັດທະນາໃນອະນາຄົດ.


**ບົດຄັດຫຍໍ້:**

ກະສິກຳ ເພື່ອສຸຂະພາບ ແມ່ນສ່ວນປະກອບສຳຄັນຂອງລະບົບສະໜັບສະໜູນວິທະຍາສາດ ແລະ ເຕັກໂນໂລຊີກະສິກຳມູນຄ່າສູງໃນລະບົບນິເວດ, ແມ່ນທິດທາງກະສິກຳໃນອະນາຄົດ, ແມ່ນທາງອອກທີ່ດີໃນການແກ້ໄຂບັນຫາວິກິດການຂາດແຄນທາງດ້ານພະລັງງານ ແລະ ອາຫານທັງໃນປັດຈຸບັນ ແລະ ອະນາຄົດ, ບົດນີ້ຈະສັງລວມບັນດາບົດລາຍງານຕ່າງໆທີ່ກ່ຽວຂ້ອງເພື່ອສະຫຼຸບ ແລະ ວິເຄາະສະພາບການພັດທະນາຂອງກະສິກຳເພື່ອສຸຂະພາບໃນປະຈຸບັນ ແລະ ສະເໜີຂໍ້ແນະນຳສຳລັບການພັດທະນາກະສິກຳເພື່ອສຸຂະພາບຂອງ ສປ ຈີນ ແລະ ບັນດາປະເທດອາຊຽນ, ເພື່ອເປັນແນວທາງໃນການພັດທະນາກະສິກຳເພື່ອສຸຂະພາບ.


## Functional agriculture development status and development suggestions

Zhuang Yifu[1], Zhuang Mingchuan[1]， Phouthapane Vanhnaseng[2]


**Abstract:**

Functional agriculture is an integral part of the ecological high-value agricultural science and technology support system, It is the future direction of agriculture, It is a good solution to current and future energy crises and food shortages, This project summarizes relevant reports to summarize and analyze the development status of functional agriculture and put forward suggestions for the devel-



opment of functional agriculture in China and ASEAN, To provide direction for the development of functional agriculture.

---

[1] Zhuang Yifu, Zhuang Mingchuan，Guangxi Wellcome Biotechnology Co., Ltd., Nanning, Guangxi

[2] Phouthapane Vanhnaseng，Department of Livestock and Fisheries, Ministry of Agriculture and Forestry

**1. ບົດນຳ**

ກະສິກຳ ເພື່ອສຸຂະພາບ ສ່ວນຫຼາຍໝາຍເຖິງການເພີ່ມຄຸນຄ່າທາງດ້ານໂພຊະນາການ ແລະ ສຸຂະພາບຂອງຜະລິດຕະພັນກະສິກຳໂດຍຜ່ານການເສີມໂພຊະນາການທາງຊີວະພາບ ຫຼື ເຕັກໂນໂລຊີຊີວະພາບອື່ນໆ. ຜະລິດຕະພັນກະສິກຳ ເພື່ອສຸຂະພາບ ໂດຍທົ່ວໄປປະກອບມີຜະລິດຕະພັນກະສິກຳທີ່ອຸດົມດ້ວຍສານເຊເລນຽມ, ຜະລິດຕະພັນກະສິກຳທີ່ມີສານຈຳເປັນຂອງຮ່າງກາຍ, ຜະລິດຕະພັນນ້ຳມັນ ເພື່ອສຸຂະພາບຊະນິດພິເສດ ແລະ ອື່ນໆ. ຜູ້ທີ່ຮັບປະທານຜະລິດຕະພັນກະສິກຳເພື່ອສຸຂະພາບບໍ່ຈຳເປັນຕ້ອງປ່ຽນແປງຄວາມລຶ້ງເຄີຍໃນການບໍລິໂພກ ແລະ ປະລິມານຂອງອາຫານ, ຜະລິດຕະພັນກະສິກຳເພື່ອສຸຂະພາບຍັງສາມາດປ້ອງກັນ ແລະ ຄວບຄຸມພະຍາດບາງຊະນິດໄດ້.

ກະສິກຳ ເພື່ອສຸຂະພາບ ແມ່ນເຕັກໂນໂລຊີການເພີ່ມມູນຄ່າໃໝ່ໃຫ້ແກ່ຜະລິດຕະພັນກະສິກຳ, ເພື່ອຍົກລະດັບຄຸນນະພາບທາງໂພຊະນາການ ຂອງຜະລິດຕະພັນກະສິກຳ, ຕອບສະໜອງຄວາມຕ້ອງການດ້ານການດູແລສຸຂະພາບຂອງຜູ້ບໍລິໂພກ, ຫັນປ່ຽນຈາກກະສິກຳ “ອຸດສາຫະກຳສະບຽງອາຫານ” ເປັນ“ອຸດສາຫະກຳສຸຂະພາບ”, ສາມາດບັນລຸໄດ້ “ລາຍຮັບຂອງຂະແໜງກະສິກຳເພີ່ມຂຶ້ນ, ລາຍຮັບຊາວກະສິກອນເພີ່ມຂຶ້ນ ແລະ ປະຊາກອນມີອາຍຸຍືນຂຶ້ນ”.

ຈາກແນວຄວາມຄິດ ແລະ ຄວາມສຳຄັນຂອງກະສິກຳເພື່ອສຸຂະພາບ, ແນ່ນອນວ່າເປັນການປະຕິວັດເຕັກໂນໂລຊີກະສິກຳຄັ້ງໃໝ່, ນອກຈາກນີ້ຍັງເປັນທາງອອກທີ່ດີໃນການແກ້ໄຂວິກິດການຂາດແຄນທາງດ້ານພະລັງງານ ແລະ ອາຫານທັງໃນປັດຈຸບັນ ແລະ ໃນອະນາຄົດ.

**2. ແນວໂນ້ມການພັດທະນາກະສິກຳເພື່ອສຸຂະພາບ**

ຖ້າເບິ່ງຈາກຈາກມຸມມອງຂອງການພັດທະນາ ອຸດສາຫະກຳກະສິກຳ, ການປັບປຸງຄຸນນະພາບຊີວິດຂອງປະຊາກອນ ແລະ ການພັດທະນາເສດຖະກິດ-ສັງຄົມ, ກະສິກຳເພື່ອສຸຂະພາບແມ່ນມີແນວໂນ້ມການພັດທະນາທີ່ດີ.

ອີງຕາມການຄາດຄະເນ ມີ 2 ຕື້ຄົນໃນທົ່ວໂລກແມ່ນຕົກຢູ່ໃນສະພາບ “ຄວາມຫິວທີ່ບໍ່ເປີດເຜີຍ” ຍ້ອນຮ່າງກາຍຂາດສານອາຫານທີ່ຈຳເປັນ, “ຄວາມຫິວທີ່ບໍ່ເປີດເຜີຍ” ກຳລັງກາຍເປັນອັນຕະລາຍຢ່າງຮ້າຍແຮງຕໍ່ສຸຂະພາບຂອງມະນຸດ, ໂດຍສະເພາະຢູ່ໃນບັນດາປະເທດທີ່ກຳລັງພັດທະນາ ແມ່ນສະແດງອອກໃຫ້ເຫັນໄດ້ຢ່າງຊັດເຈນ. ບັນດາປະເທດເອີຣົບ ແລະ ອາເມລິກາກໍ່ໄດ້ສະເໜີການແກ້ໄຂບັນຫາດັ່ງກ່າວ ດ້ວຍວິທີການຜະລິດອາຫານເພື່ອສຸຂະພາບ.

ຜ່ານການພັດທະນາທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ, ການຜະລິດ ຜະລິດຕະພັນກະສິກຳເພື່ອສຸຂະພາບແມ່ນຜ່ານການປັບປຸງພັນພືດ, ເຕັກໂນໂລຊີກະສິກຳ ແລະ ການເພີ່ມເຕັກໂນໂລຊີທາງຊີວະພາບ ແລະ ອື່ນໆ. ໄດ້ກາຍເປັນຈຸດທີ່ໄດ້ຮັບຄວາມສົນໃຈໃໝ່, ຖ້າທຽບໃສ່ເຕັກນິກແບບດັ້ງເດີມໃນອາດີດແມ່ນມີຄວາມສາມາດບົ່ມຊ້ອນສູງດ້ານເສດຖະກິດ, ເຊື່ອໝັ້ນໄດ້ທາງດ້ານເຕັກນິກ ແລະ ເປັນທີ່ຍອມຮັບຂອງສາທະລະນະ

ຂຶ້ນ, ປັດຈຸບັນ ໄດ້ບັນລຸຜົນສຳເລັດໃນເບື້ອງຕົ້ນ ແລະ ມີແນວໂນ້ມຕໍ່ການພັດທະນາດີຂຶ້ນ. ດັ່ງນັ້ນ, ນັກຊ່ຽວຊານທີ່ກ່ຽວຂ້ອງຂອງ ສປ. ຈີນ ຈຶ່ງໄດ້ສະເໜີແນວທາງຍຸດທະສາດການພັດທະນາກະສິກຳເພື່ອສຸຂະພາບ ແລະ ກໍໄດ້ຮັບຄວາມສົນໃຈຈາກບັນດາໜ່ວຍງານຂອງພາກລັດ ແລະ ເອກະຊົນທີ່ກ່ຽວຂ້ອງ, ໂດຍໄດ້ດຳເນີນການຄົ້ນຄ້ວາ ແລະ ການສາທິດເຕັກນິກຫຼັກຂອງກະສິກຳເພື່ອສຸຂະພາບ ແລະ ໄດ້ມີການບຸກທະລຸເຕັກນິກທີ່ສຳຄັນຫຼາຍດ້ານ.

ກະສິກຳເພື່ອສຸຂະພາບແມ່ນທິດທາງໃໝ່ທີ່ກ່ຽວພັນກັບ "ຊາວກະສິກອນຈະປູກຫຍັງໃນອະນາຄົດ, ປະຊາກອນຈະກິນຫຍັງໃນອະນາຄົດ". ກະສິກຳເພື່ອສຸຂະພາບຈະເປັນທ່າອ່ຽງໃໝ່ໃນການພັດທະນາກະສິກຳຂອງໂລກ, ໃນປັດຈຸບັນ ແມ່ນຊ່ວງເວລາທີ່ດີສຳລັບການພັດທະນາ ແລະ ຍັງເປັນທາງອອກໃໝ່ລະດັບຫຼາຍພັນຕື້. ຍອດມູນຄ່າການຜະລິດກະສິກຳເພື່ອສຸຂະພາບຂອງ ສປ. ຈີນ ຈະບັນລຸ 150 ຕື້ຢວນ ໃນແຜນການ 5 ປີ ຄັ້ງທີ 14 . ຄາດວ່າຮອດປີ 2035, ຍອດມູນຄ່າການຜະລິດຜະລິດຕະພັນກະສິກຳເພື່ອສຸຂະພາບໃນທົ່ວໂລກຈະບັນລຸ 300 ຕື້ຢວນ.

**3. ບັນຫາ ແລະ ຂໍ້ສະເໜີຕໍ່ການພັດທະນາກະສິກຳເພື່ອສຸຂະພາບ**

ບໍ່ວ່າຈະເປັນປັດໄຈທາງກົງ ຫຼື ທາງອ້ອມ, ການພັດທະນາກະສິກຳເພື່ອສຸຂະພາບກໍ່ຍັງມີຫຼາຍບັນຫາເຊັ່ນ: ການກະຈາຍພື້ນທີ່ການບໍລິໂພກກະສິກຳເພື່ອສຸຂະພາບຍັງບໍ່ສະໝໍ່າສະເໝີ, ການບໍລິໂພກຢູ່ເຂດພັດທະນາແມ່ນດີກວ່າເຂດຫ່າງໄກສອກຫຼີກ, ສັບພະຄຸນ ຂອງບັນດາຜະລິດຕະພັນສ່ວນຫຼາຍຢາກຄ້າຍຄືກັນ, ບໍ່ມີການພັດທະນາຄວາມຫຼາກຫຼາຍຂອງຜະລິດຕະພັນ, ວິສາຫະກິດຍັງແມ່ນຂະໜາດນ້ອຍ, ເຮັດໃຫ້ທ່າແຮງການພັດທະນາບໍ່ພຽງພໍ, ລະບົບການປະເມີນຜົນສັບພະຄຸນຂອງຜະລິດຕະພັນຍັງບໍ່ທັນສົມບູນຄົບຖ້ວນ ແລະ ອື່ນໆ.

ຕົວຢ່າງ ແຂວງກວາງຊີ ສປ. ຈີນ, ໃນຊຸມປີຜ່ານມາ, ກວາງຊີໄດ້ອີງໃສ່ຄວາມໄດ້ປຽບເນື່ອງຈາກມີເນື້ອທີ່ປູກຝັງທີ່ອຸດົມສົມບູນດ້ວຍຊີເລນຽມຫຼາຍທີ່ສຸດໃນທົ່ວປະເທດ, ໂດຍໄດ້ມີຄວາມມຸ້ງໝັ້ນທີ່ຈະສ້າງລະບົບອຸດສາຫະກຳກະສິກຳເພື່ອສຸຂະພາບທີ່ອຸດົມດ້ວຍຊີເລນຽມ, ໄດ້ມີຄວາມກ້າວໜ້າ ແລະ ມີຜະລິດຕະພັນກະສິກຳທີ່ອຸດົມດ້ວຍຊີເລນຽມທຳມະຊາດຈຳນວນຫຼາຍ. ນອກນັ້ນ, ຍັງໄດ້ໄດ້ດຳເນີນການຮ່ວມມືກັບບັນດາປະເທດອາຊຽນເພື່ອສ້າງຕະຫຼາດຜະລິດຕະພັນກະສິກຳເພື່ອສຸຂະພາບ ທີ່ອຸດົມດ້ວຍຊີເລນຽມເພື່ອສົ່ງອອກໄປຕ່າງປະເທດ. ແຕ່ກໍ່ຍັງເປັນເລື່ອງປົກກະຕິຕໍ່ການຮັບຮູ້ຍີ່ຫໍ້ຂອງຜະລິດຕະພັນກະສິກຳທີ່ອຸດົມດ້ວຍຊີເລນຽມ ສ່ວນຫຼາຍຍັງບໍ່ສູງ, ຍັງຂາດຄວາມສາມາດການແຂ່ງຂັນໃນການຕະຫຼາດ, ຜະລິດຕະພັນກະສິກຳເພື່ອສຸຂະພາບ ຍັງຢູ່ດ້ານລຸ່ມສຸດໃນລະບົບຕ່ອງໂສ້ອຸດສາຫະກຳ, ປະລິມານຊີເລນຽມຂອງຜະລິດຕະພັນຍັງບໍ່ໝັ້ນຄົງ, ກຳລັງການຜະລິດຂອງບໍລິສັດຍັງຂະໜາດນ້ອຍ ແລະ ມີທ່າແຮງຕໍ່າ, ສັບພະຄຸນຂອງຜະລິດຕະພັນມີຄວາມຄ້າຍຄືກັນ, ເຕັກໂນໂລຊີການຜະລິດຕໍ່າ, ການປອມແປງງ່າຍ ແລະ ບັນຫາອື່ນໆ. ເຖິງແມ່ນວ່າ ຜ່ານການພັດທະນາຫຼາຍປີໄດ້ເຮັດໃຫ້ຂະໜາດອຸດສາຫະກຳໄດ້ເພີ່ມຂຶ້ນເທື່ອລະກ້າວກໍ່ຕາມ, ແຕ່ຂະໜາດດັ່ງກ່າວ ແມ່ນຍັງບໍ່ທັນໄດ້ຮັບການປັບປຸງທາງດ້ານຄຸນນະພາບ ແລະ ຍັງຄົງໝູນວຽນຢູ່ໃນລະດັບມາດຕະຖານຕໍ່າ.

ອີງຕາມ ປະສົບການ ແລະ ຜົນການຄົ້ນຄວ້າ ທັງພາຍໃນ ແລະ ຕ່າງປະເທດ, ເພື່ອເຮັດໃຫ້ກະສິກຳເພື່ອສຸຂະພາບ ມີການພັດທະນາຢ່າງຕໍ່ເນື່ອງ ແລະ ແກ້ໄຂບັນຫາ "ຄວາມທົ່ວທີ່ບໍ່ເປີດເຜີຍ" ໃຫ້ໄດ້ໂດຍພື້ນຖານແມ່ນມີຄວາມຈຳເປັນຕ້ອງພັດທະນາຕ່ອງໂສ້ອຸດສາຫະກຳກະສິກຳເພື່ອສຸຂະພາບທັງໝົດ, ການຄົ້ນຄ້ວາເຕັກໂນໂລຊີ ແລະ ການສ້າງລະບົບຄຸ້ມຄອງຕ້ອງດຳເນີນໄປພ້ອມໆກັນ, ການຄົ້ນຄ້ວາເຕັກໂນໂລຊີລວມມີການຄົ້ນຄ້ວາ ແລະ ພັດທະນາລະບົບເຕັກນິກຫຼັກ 6 ລະບົບ ໄດ້ແກ່ການປັບປຸງພັນພືດ, ການປູກຝັງ ແລະ ການປັບປຸງເຊື້ອຈຸລິນຊີ, ການສ້າງລະບົບຄຸ້ມຄອງແມ່ນສຸມໃສ່ການສ້າງກົນໄກປະຕິບັດງານການຮ່ວມມືຫຼາຍດ້ານ ແລະ ຫຼາຍຂະແໜງການ. ໂດຍສະເພາະທິດທາງໃນການສະໜອງຜະລິດຕະພັນກະສິກຳເພື່ອສຸຂະພາບໄດ້ຮັບການຮອງຮັບ. ການແນະນຳນະໂຍບາຍສະໜັບສະໜູນ ຈາກໜ່ວຍງານຂອງລັດທີ່ກ່ຽວຂ້ອງ ກັບການຜະລິດກະສິກຳເພື່ອສຸຂະພາບ, ການສ້າງກົນໄກການປະເມີນຜົນຜະລິດຕະພັນ ແລະ ເພີ່ມທະວີການຮ່ວມມືກັບສາກົນ ແລະ ພາກ



ພື້ນ, ການນຳເຂົ້າເຕັກໂນໂລຊີທັນສະໄໝ ແລະ ນະວັດກຳມາປະສົມປະສານຢູ່ທ້ອງຖິ່ນ ແລະ ສ້າງຜູ້ນຳພາມະຫາຊົນເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ອຸດສາຫະກຳກະສິກຳເພື່ອສຸຂະພາບ, ການດູແລ ແລະ ຄັດເລືອກເອົາຍີ່ຫໍ້ຜະລິດຕະພັນກະສິກຳເພື່ອສຸຂະພາບຈຳນວນໜຶ່ງ, ການສ້າງຊຸດມາດຕະຖານເພື່ອບັນລຸການກຳນົດມາດຕະຖານ, ການຄຸ້ມຄອງເຄື່ອງໝາຍການຄ້າ, ການປະຕິບັດຍຸດທະສາດຍີ່ຫໍ້ ແລະ ການກວດກາຄຸນນະພາບຜະລິດຕະພັນແບບຄົບວົງຈອນ, ສ້າງຍີ່ຫໍ້ທີ່ມີເອກະລັກສະເພາະໃນລະດັບພາກພື້ນໃຫ້ກາຍເປັນລະບົບ. ດັ່ງນັ້ນ, ຂໍ້ແນະນຳຕໍ່ການພັດທະນາກະສິກຳເພື່ອສຸຂະພາບຂອງ ສປ. ຈີນ ແມ່ນມີດັ່ງລຸ່ມນີ້:

**1) ເພີ່ມທະວີການຄົ້ນຄ້ວາວິທະຍາສາດ ແລະ ເຕັກໂນໂລຊີທີ່ມີຈຸດສຸມ, ສ້າງຜະລິດຕະພັນທີ່ມີສັບພະຄຸນໝັ້ນຄົງ:**

ໂດຍຜ່ານການສ້າງລະບົບການຄົ້ນຄ້ວາ ແລະ ພັດທະນາແບບຄົບວົງຈອນ, ເສີມສ້າງຄວາມເຂັ້ມແຂງການຄົ້ນຄວ້າກ່ຽວກັບການປູກແນວພັນພືດກະສິກຳເພື່ອສຸຂະພາບ, ສ້າງຄວາມເຂັ້ມແຂງ ຫຼື ຄວາມໝັ້ນຄົງຂອງອົງປະກອບກະສິກຳເພື່ອສຸຂະພາບ, ຕະຫຼອດເຖິງການປຸງແຕ່ງຜະລິດຕະພັນ, ຕ້ອງແກ້ໄຂບັນຫາຄວາມບໍ່ໝັ້ນຄົງຈາກແຫຼ່ງທີ່ມາຂອງທາດອົງປະກອບ ແລະ ຄຸນນະພາບຂອງກະສິກຳເພື່ອສຸຂະພາບ, ສ້າງເປັນຄູ່ມືດ້ານເຕັກນິກການປູກພືດທີ່ສາມາດກຳນົດປະລິມານ, ມາດຕະຖານ ແລະ ອຸດສາຫະກຳ, ຢູ່ໃນຂະບວນການ ການ



ທົດສອບຝຸ່ນ, ມາດຕະການເຕັກນິກການໃສ່ຝຸ່ນ, ສູດຝຸ່ນ, ການແນະນຳດ້ານວິຊາການ, ການຝຶກອົບຮົມພາກສະໜາມ, ການຄາດຄະເນການສ້າງຜະລິດຕະພັນໄລຍະກາງ, ການກຳນົດແຜນການຜະລິດ, ການກວດສອບຜະລິດຕະພັນ, ການເຜີຍແຜ່ຜະລິດຕະພັນ ແລະ ອື່ນໆ, ທຸກໆຂັ້ນຕອນຕ້ອງປະຕິບັດຕາມລະບົບມາດຕະຖານທີ່ເຂັ້ມງວດ, ການຄຸ້ມຄອງ ແລະ ການກວດສອບທີ່ໄດ້ມາດຕະຖານ, ເພື່ອຮັບປະກັນມາດຕະຖານຄຸນນະພາບຂອງທາດອົງປະກອບເພື່ອສຸຂະພາບຂອງຜະລິດຕະພັນ, ໂດຍອີງໃສ່ພື້ນຖານເຫຼົ່ານີ້, ເພື່ອພັດທະນາຜະລິດຕະພັນກະສິກຳເພື່ອສຸຂະພາບໃຫ້ສາມາດເພີ່ມປະສິດທິພາບສັບພະຄຸນທີ່ໝັ້ນຄົງ ແລະ ມູນຄ່າໃຫ້ສູງຂຶ້ນ.

**2) ເສີມຂະຫຍາຍການກໍ່ສ້າງລະບົບຕະຫຼາດ, ເຊື່ອມໂຍງກັບອຸດສາຫະກຳສຸຂະພາບຂະໜາດໃຫຍ່:**

ນຳເອົາຜະລິດຕະພັນກະສິກຳເພື່ອສຸຂະພາບເຊື່ອມໂຍງກັບອຸດສາຫະກຳສຸຂະພາບຂະໜາດໃຫຍ່, ເພີ່ມທະວີການເຜີຍແຜ່ໂຄສະນາ, ໃຫ້ທິດຊີ້ນຳປະຊາຊົນໃຫ້ມີຄວາມຄິດເຫັນທີ່ຖືກຕ້ອງ, ສົ່ງເສີມຄຸນຄ່າທາງໂພຊະນາການ, ສຸຂະພາບ ແລະ ສ່ວນປະກອບທາງດ້ານໂພຊະນາສະເພາະຢ່າງເປັນລະບົບ, ເພີ່ມຄວາມເຊື່ອໝັ້ນໃຫ້ແກ່ຜູ້ບໍລິໂພກຜະລິດຕະພັນກະສິກຳເພື່ອສຸຂະພາບ, ນຳເອົາຜະລິດຕະພັນກະສິກຳເພື່ອສຸຂະພາບເຂົ້າສູ່ລະບົບຊ່ອງທາງການຊື້ຂາຍສິນຄ້າບໍລິໂພກ ແລະ ຜະລິດຕະພັນດູແລສຸຂະພາບ, ສ້າງຕັ້ງລະບົບການຊື້ຂາຍ ແລະ ລະບົບການຕະຫຼາດຂອງຜະລິດຕະພັນກະສິກຳເພື່ອສຸຂະພາບໃຫ້ວ່ອງໄວຂຶ້ນ.

**3) ເພີ່ມທະວີດຶງດູດການລົງທຶນ ແລະ ການຊ່ວຍເຫຼືອຂອງພາກລັດ, ພັດທະນາພາບລວມຍີ່ຫໍ້ທີ່ເຂັ້ມແຂງ:**

ແຮງຜັກດັນເບື້ອງຫຼັງຂອງການສ້າງຍີ່ຫໍ້ແມ່ນເງິນທຶນ ແລະ ນະໂຍບາຍ, ການສະໜັບສະໜູນນະໂຍບາຍທີ່ເຂັ້ມແຂງແມ່ນວິທີການຫຼັກເພື່ອດຶງດູດການລົງທຶນ, ຢູ່ໃນເຂດລວມສູນຂອງການຜະລິດ ຜະລິດຕະພັນເພື່ອສຸຂະພາບ, ແມ່ນດຶງດູດການລົງທຶນໂດຍຜ່ານລະບົບນະໂຍບາຍບຸລິມະສິດແບບຫຼາຍມາດຕະການ, ໂດຍໄດ້ດຶງດູດບັນດາທຶນຮອນທັງພາຍໃນ ແລະ ຕ່າງປະເທດ ແລະ ບັນດາວິສາຫະກິດຂະໜາດໃຫ່ຍເຂົ້າມາດຳເນີນທຸລະກິດ, ຮ່ວມມືກັບບໍລິສັດຢູ່ໃນທ້ອງຖິ່ນເພື່ອປັບປຸງການສ້າງລະບົບຕ່ອງໂສ້ອຸດສາຫະກຳທີ່ມີຍີ່ຫໍ້, ສ້າງພາບລວມຍີ່ຫໍ້ບາງຊະນິດຂອງຜະລິດຕະພັນເພື່ອສຸຂະພາບ. ດ້ວຍວິທີນີ້ ພວກເຮົາໄດ້ຝຶກຝົນ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຄົນທີ່ມີຄວາມສາມາດສູງດ້ານນະວັດຕະກຳ. ການປຸງແຕ່ງເຕັກໂນໂລຊີສູງ, ໃຫ້ກາຍເປັນບໍລິສັດນຳໜ້າໃນອຸດສາຫະກຳທີ່ອຸດົມຊີເລນຽມ, ຊຸກຍູ້ການພັດທະນາອຸດສາຫະກຳກະສິກຳເພື່ອສຸຂະພາບໃຫ້ໝັ້ນຄົງ, ແຂງແຮງ ແລະ ວ່ອງໄວ.

**4) ເພີ່ມທະວີການຮ່ວມມືລະຫວ່າງປະເທດ ແລະ ພາກພື້ນ, ແກ້ໄຂການຂາດແຄນຜະລິດຕະພັນໃນພາກພື້ນ:**

ນຳໃຊ້ແຫຼ່ງຊັບພະຍາກອນທີ່ຫຼາກຫຼາຍເພື່ອສ້າງຜະລິດຕະພັນກະເສດ ເພື່ອຄຸນນະພາບທີ່ມີລັກສະນະໂດດເດັ່ນຂອງອາຊຽນ, ໂດຍນຳໃຊ້ເຕັກໂນໂລຊີການປູກຝັງ ແລະ ການຜະລິດທີ່ທັນສະໄໝຂອງບັນດາປະເທດທີ່ພັດທະນາແລ້ວ ເພື່ອປັບປຸງກົນໄກການຮ່ວມມືຂ້າມພາກພື້ນ, ນຳເຂົ້າແນວພັນໃໝ່ ແລະ ເທັກໂນໂລຊີໃໝ່, ປະຕິບັດການນະວັດຕະກຳ ແລະ ການທັນປ່ຽນແບບປະສົມປະສານເຂົ້າໃນທ້ອງຖິ່ນ, ເພື່ອທົດແທນການຂາດແຄນແນວພັນໃນພາກພື້ນ, ເລັ່ງການຍົກລະດັບຂອງຜະລິດຕະພັນເພື່ອສຸຂະພາບ, ເພື່ອປິດຊ່ອງຫວ່າງໄລຍະຫ່າງກັບຜະລິດຕະພັນອື່ນໆໃຫ້ໄວຂຶ້ນ, ເພື່ອໃຫ້ສາມາດແຂ່ງຂັນແບບເຊິ່ງໜ້າກັບຜະລິດຕະພັນຕ່າງໆໄດ້.

**5) ປັບປຸງການສ້າງລະບົບມາດຕະຖານ ແລະ ສົ່ງເສີມການກຳນົດ ແລະ ກວດສອບຄຸນນະພາບແບບຄົບວົງຈອນ:**

ລະບົບມາດຕະຖານກະສິກຳເພື່ອສຸຂະພາບໃນປັດຈຸບັນຕ້ອງໄດ້ປັບປຸງ ແລະ ເພີ່ມປະສິດທິພາບ, ໃຫ້ກາຍເປັນລະບົບມາດຕະຖານທີ່ມີທັດສະນະສາກົນ ແລະ ປະສົມປະສານກັບເອກະລັກຂອງທ້ອງຖິ່ນຢ່າງກົມກຽວ, ໂດຍຜ່ານການສ້າງຕັ້ງນິຄົມອຸດສາຫະກຳ, ບັນລຸການກຳນົດມາດຕະຖານແບບຄົບວົງຈອນ, ການ



ຄຸ້ມຄອງເຄື່ອງໝາຍການຄ້າແບບຄົບວົງຈອນ, ການປະຕິບັດຍຸດທະສາດຍີ່ຫໍ້ແບບຄົບວົງຈອນ, ການຄວບຄຸມຄຸນນະພາບຂອງຜະລິດຕະພັນແບບຄົບວົງຈອນ, ກາຍເປັນລະບົບທີ່ນຳພາໂດຍມາດຕະຖານ, ນຳໃຊ້ຄຸນນະພາບຂອງຜະລິດຕະພັນເພື່ອສົ່ງເສີມການພັດທະນາການຕະຫຼາດ, ຍີ່ຫໍ້ ແລະ ອຸດສາຫະກຳ.

**4. ວິເຄາະການພັດທະນາການຮ່ວມມືກະສິກຳເພື່ອສຸຂະພາບລະຫວ່າງ ສປ. ຈີນ ກັບ ອາຊຽນ**

ໃນດ້ານການຮ່ວມມືສາກົນ ແລະ ພາກພື້ນ, ແມ່ນໃຫ້ບຸລິມະສິດການຮ່ວມມືກັບບັນດາປະເທດອາຊຽນໃນຂົງເຂດກະສິກຳເພື່ອສຸຂະພາບກ່ອນ, ໂດຍສະເພາະແມ່ນດ້ານການນຳເຂົ້າ, ການປະສົມປະສານ, ການເຊື່ອມໂຍງ ແລະ ການປະດິດສ້າງບັນດາຜະລິດຕະພັນກະສິກຳເພື່ອສຸຂະພາບທີ່ມີເອກະລັກຂອງບັນດາປະເທດອາຊຽນ, ແມ່ນຈະມີບົດບາດດີຂຶ້ນໃນການສົ່ງເສີມກະສິກຳເພື່ອສຸຂະພາບຂອງແຂວງກວາງຊີ ກໍ່ຄື ສປ. ຈີນ.

ຜ່ານການຈັດຕັ້ງປະຕິບັດຂໍ້ລິເລີ່ມ **"ໜຶ່ງແລວໜຶ່ງເສັ້ນທາງ"**, ສປ. ຈີນ ແລະ ບັນດາປະເທດອາຊຽນໄດ້ກາຍເປັນຄູ່ຮ່ວມມືຍຸດທະສາດທີ່ໃກ້ຊິດ. ຜ່ານການພັດທະນາ ແລະ ປັບປຸງເຂດການຄ້າເສລີ ຈີນ-ອາຊຽນ (CAFTA), ບັນດາປະເທດອາຊຽນແມ່ນຈຸດໝາຍປາຍທາງສົ່ງອອກຜະລິດຕະພັນກະສິກຳໃຫຍ່ອັນດັບ 2 ແລະເປັນແຫຼ່ງນຳເຂົ້າຜະລິດຕະພັນກະສິກຳໃຫຍ່ອັນດັບ 3 ຂອງ ສປ. ຈີນ. ການຮ່ວມມືຂ້າມຊາດລະຫວ່າງຈີນກັບວິສາຫະກິດກະສິກຳອາຊຽນ ໝາຍເຖິງຄວາມພະຍາຍາມຂອງແຕ່ລະປະເທດເພື່ອໄດ້ຮັບຊັບພະຍາກອນທາງກະສິກຳ ແລະ ຄວາມສາມາດໃນການຜະລິດທີ່ມີເອກະລັກສະເພາະຂອງກັນ ແລະ ກັນ, "ການພົວພັນຮ່ວມມືຍຸດທະສາດ" ຄວນສ້າງຕັ້ງຂຶ້ນໂດຍຜ່ານລະບົບຕ່ອງໂສ້ນິຄົມອຸດສາຫະກຳ ບໍ່ວ່າລວງນອນ ຫຼື ລວງຕັ້ງ, ຂໍ້ຕົກລົງ ຫຼື ການຮ່ວມລົງທຶນ.

ບັນດາປະເທດອາຊຽນມີຫຼາຍແນວພັນພືດ ທີ່ມີທ່າແຮງສູງໃນດ້ານຜົນຜະລິດ, ຄຸນນະພາບ ແລະ ຄວາມຕ້ານທານ ເຊັ່ນເຂົ້າໜຽວດຳຂອງ ສປປ ລາວ ແມ່ນອຸດົມໄປດ້ວຍທາດສັງກະສີ, ແຄວຊຽມ ແລະ ທາດອື່ນໆ ທີ່ມີປະໂຫຍດສະເພາະຕໍ່ຮ່າງກາຍຂອງມະນຸດ, ມີຜົນດີຕໍ່ການປິ່ນປົວພະຍາດອັກເສບຕັບ ແລະ ພະຍາດໝາກໄຂ່ຫຼັງ, ແມ່ນຢາບຳລຸງຮ່າງກາຍດີເລີດ. ນອກນັ້ນ, ເມັດເຂົ້າເນື້ອເຕັມ, ສີສົດໃສ, ເມັດຍາວ, ເໜຼື້ອມ, ອ່ອນ ແລະ ມີກິ່ນຫອມ, ລົດຊາດດີກວ່າເຂົ້າຫອມໄທ, ແມ່ນອາຫານ "ຫ້າສີດຳ" ດີທີ່ສຸດຂອງ ສປປ ລາວ. ຖ້າຫາກວ່າມີການສຳຫຼວດພືດທີ່ມີຄຸນຄ່າທາງດ້ານໂພສະນາການສູງເຊັ່ນ: ເຂົ້າໜຽວດຳຈາກອາຊຽນ ແລະ ປະເທດອື່ນໆຕື່ມອີກ.



ການປູກຝັງ ແລະ ພັດທະນາຜະລິດຕະພັນກະສິກຳເພື່ອສຸຂະພາບແມ່ນສາມາດແຂ່ງຂັນໄດ້ໂດຍຜ່ານການສະໜັບສະໜູນດ້ານເຕັກນິກ ແລະ ການຮ່ວມມື,ການພັດທະນາການປູກ ແລະ ການປຸງແຕ່ງໃນປະເທດອາຊຽນ ຫຼື ສປ. ຈີນ ຈະນຳໃຊ້ຂໍ້ດີຂອງທັງສອງຝ່າຍຢ່າງເຕັມສ່ວນເພື່ອສົ່ງເສີມກະສິກຳ ເພື່ອສຸຂະພາບ ໄປສູ່ລະດັບໃໝ່, ສາມາດຫຼຸດຜ່ອນຄວາມຫຍຸ້ງຍາກ ແລະ ເວລາຂອງການປູກຝັງແບບສ່ວນຕົວໄດ້ຢ່າງຫຼວງຫຼາຍ ແລະ ສາມາດຍົກລະດັບກະສິກຳແບບດັ້ງເດີມ ໄປສູ່ລະດັບການຊຸກຍູ້ການຫັນປ່ຽນ ແລະ ການຍົກລະດັບລະບົບຕ່ອງໂສ້ການສະໜອງສິນຄ້າໄດ້ຢ່າງວ່ອງໄວ.

ປັດຈຸບັນ, ກົນໄກ ແລະ ລະບົບການຮ່ວມມື ສປ. ຈີນ-ອາຊຽນ ໄດ້ສ້າງຕັ້ງຂຶ້ນໂດຍພື້ນຖານແລ້ວ, ການຮ່ວມມືດ້ານເຕັກນິກ, ລະບົບການຂົນສົ່ງ ແລະ ພື້ນຖານໂຄງລ່າງການຮ່ວມມືໄດ້ຮັບການປັບປຸງ. ນອກນັ້ນ, ຍັງມີຮູບແບບການລົງທຶນ ແລະ ລະບົບການເງິນກໍ່ຍັງໄດ້ຮັບການສ້າງຕັ້ງຂຶ້ນເທື່ອລະກ້າວ. ສ້າງພື້ນຖານໃຫ້ແກ່ການພັດທະນາກະສິກຳເພື່ອສຸຂະພາບ, ຖ້າຫາກວ່າເງື່ອນໄຂ ຫຼື ພື້ນຖານຕໍ່ໄປນີ້ສາມາດປັບປຸງໄດ້, ພື້ນຖານການຮ່ວມມືຈະຖືກເປີດກ້ວາງ ແລະ ລົງສູ່ລວງເລິກຍິ່ງຂຶ້ນ, ການຮ່ວມມືສາກົນໃນຂົງເຂດກະສິກຳເພື່ອສຸຂະພາບຈະໄດ້ຮັບການຊຸກຍູ້ໃຫ້ຂຶ້ນສູ່ລະດັບສູງໃໝ່.

**1) ສ້າງທີມງານກະສິກຳເພື່ອສຸຂະພາບທີ່ມີຄວາມສາມາດຮ່ວມມືກັບສາກົນ**

ປັດຈຸບັນ, ການຮ່ວມມືດ້ານກະສິກຳລະຫວ່າງ ສປ. ຈີນ-ອາຊຽນ ຍັງຂາດແຄນບຸກຄະລາກອນທີ່ມີຄວາມສາມາດສູງ, ເຮັດໃຫ້ການພັດທະນາການຮ່ວມມືຖືກຈຳກັດ, ໂດຍສະເພາະໃນພາກພື້ນອາຊຽນ, ກະສິກຳເພື່ອສຸຂະພາບແມ່ນຍັງຢູ່ໃນໄລຍະເລີ່ມຕົ້ນ, ຄວາມຮັບຮູ້ບໍ່ສາມາດທັນກັບຄວາມຕ້ອງການໃນການພັດທະນາໄດ້, ຈຳເປັນຕ້ອງໄດ້ຮັບການຝຶກອົບຮົມສະເພາະດ້ານ, ການອົບຮົມ ແລະ ອື່ນໆ ຕ້ອງໄດ້ສ້າງທີມງານທີ່ມີຄວາມສາມາດໃນການພັດທະນາ, ການປະສານງານ ແລະ ການຄຸ້ມຄອງແບບປະສົມປະສານ, ເພື່ອເຮັດໃຫ້ການຮ່ວມມືມີຮາກຖານທີ່ໝັ້ນຄົງ.

**2) ໂດຍຜ່ານແນວທາງນະໂຍບາຍເພີ່ມທະວີການສ້າງສູນ ແນວພັນ, ປູກຝັງ ແລະ ການປຸງແຕ່ງກະສິກຳເພື່ອສຸຂະພາບຮ່ວມກັນ**

ປັດຈຸບັນ, ລະບົບນະໂຍບາຍຂອງ ສປ. ຈີນ ແມ່ນແຕກຕ່າງກັບບັນດາປະເທດອາຊຽນ, ຈຳເປັນຕ້ອງໄດ້ຊອກຫາຈຸດປະສານເຂົ້າກັນໄດ້ທາງດ້ານນະໂຍບາຍຂອງຄູ່ຮ່ວມມື, ເພື່ອໃຫ້ສາມາດດຳເນີນການຮ່ວມມືແບບຍືນຍົງ ແລະ ໝັ້ນຄົງໄດ້, ສະເໜີໃຫ້ມີການກຳນົດເປົ້າໝາຍ ແລະ ນະໂຍບາຍການຮ່ວມມືຕາມເງື່ອນໄຂສະເພາະຂອງແຕ່ລະປະເທດອາຊຽນ, ຊີ້ນຳວິສາຫະກິດ ຫຼື ການລົງທຶນ ເພື່ອເສີມສ້າງການດຳເນີນງານການຮ່ວມມືດ້ານກະສິກຳເພື່ອສຸຂະພາບລະຫວ່າງປະເທດ, ສ້າງສູນ ປູກຝັງ ແລະ ປຸງແຕ່ງເພີ່ມເຕີມເພື່ອໃຫ້ສາມາດຊຸກຍູ້ການພັດທະນາໄດ້.

ນອກຈາກນັ້ນ, ສຳລັບການນຳເຂົ້າແນວພັນ ແລະ ເຕັກນິກທີ່ກ່ຽວຂ້ອງກັບກະສິກຳເພື່ອສຸຂະພາບຄວນປັບປຸງແນວທາງນະໂຍບາຍເພື່ອເຮັດໃຫ້ຂັ້ນຕອນການນຳເຂົ້າມີຄວາມຄ່ອງຕົວຫຼາຍຂຶ້ນ.

**3) ສ້າງຍີ່ຫໍ້ກະສິກຳທີ່ເພື່ອສຸຂະພາບຊັ້ນນຳທີ່ໄດ້ຮັບການຍອມຮັບຈາກທັງສອງຝ່າຍ**

ບໍລິສັດ ແລະ ຍີ່ຫໍ້ມີຊື່ສຽງແມ່ນກຸນແຈສຳລັບສຳຄັນຕໍ່ການພັດທະນາອຸດສາຫະກຳ, ບັນດາວິສາຫະກິດຊັ້ນນຳແມ່ນຜູ້ປະຕິບັດການຮ່ວມມືຕົວຈິງ, ບໍ່ວ່າພວກເຮົາຈະສາມາດສ້າງຍີ່ຫໍ້ມີຊື່ສຽງທີ່ມີອິດທິພົນຫຼາຍ ຫຼື ບໍ່ກໍ່ຕາມແຕ່ມັນແມ່ນກຸນແຈສຳຄັນໃນການພັດທະນາອຸດສາຫະກຳ, ໂດຍຜ່ານການຊີ້ນຳ ແລະ ສະໜັບສະໜູນຂອງລັດຖະບານຄູ່ຮ່ວມມື, ຮ່ວມກັນພັດທະນາຍີ່ຫໍ້, ຈະຊ່ວຍຊຸກຍູ້ການພັດທະນາກະສິກຳເພື່ອສຸຂະພາບຂອງ ສປ. ຈີນ ແລະ ອາຊຽນໄດ້ຢ່າງຫຼວງຫຼາຍ.

ນອກຈາກນີ້, ຈຳເປັນຕ້ອງມີກົນໄກການຮ່ວມມືທີ່ມີຫົວຄິດປະດິດສ້າງ, ການພັດທະນາການສົ່ງອອກ ແລະ

ການນຳເຂົ້າ ຕ້ອງປະຕິບັດງານໄປພ້ອມໆກັນ, ສຶກສາຮູບແບບທີ່ສາມາດເລັ່ງການພັດທະນາຮ່ວມກັນໄດ້, ໂດຍຜ່ານການພັດທະນາກະສິກຳເພື່ອສຸຂະພາບ, ສາມາດຊຸກຍູ້ການຮ່ວມມືຈີນ-ອາຊຽນ ແລະ ການພັດທະນາ"ໜຶ່ງແລວທາງໜຶ່ງເສັ້ນທາງ"ໃຫ້ວ່ອງໄວຂຶ້ນ.

**5. ສະຫຼຸບ**

ກະສິກຳເພື່ອສຸຂະພາບ ແມ່ນພາກສ່ວນສຳຄັນໜຶ່ງ ຂອງກະສິກຳທີ່ມີມູນຄ່າສູງໃນລະບົບນິເວດວິທະຍາ, ນອກນີ້ ຍັງເປັນສ່ວນສຳຄັນຂອງລະບົບສະໜັບສະໜູນດ້ານວິທະຍາສາດ ແລະ ເຕັກໂນໂລຊີກະສິກຳທີ່ມີມູນຄ່າສູງອີກດ້ວຍ, ແມ່ນທິດທາງກະສິກຳໃນອານາຄົດ, ແມ່ນທາງອອກທີ່ດີຕໍ່ກັບວິກິດການຂາດແຄນພະລັງງານແລະອາຫານທັງໃນປັດຈຸບັນ ແລະ ອານາຄົດ, ມີແນວໂນ້ມການພັດທະນາຢ່າງກວ້າງຂວາງ.

ເຖິງແມ່ນວ່າ ການຂະຫຍາຍຕົວຂອງກະສິກຳເພື່ອສຸຂະພາບຍັງຢູ່ໃນລະດັບຕ່ຳ, ແຕ່ພື້ນຖານ ແລະ ໂອກາດສຳລັບການພັດທະນາແມ່ນກຽມພ້ອມແລ້ວ, ມີຄວາມຈຳເປັນຕ້ອງພັດທະນາອຸດສາຫະກຳກະສິກຳເພື່ອສຸຂະພາບໃນລະບົບຕ່ອງໂສ້ອຸດສາຫະກຳທັງໝົດ, ການຄົ້ນຄວ້າດ້ານວິຊາການ ແລະ ການສ້າງລະບົບຄຸ້ມຄອງຕ້ອງດຳເນີນໄປພ້ອມໆກັນ, ຕ້ອງໄດ້ສ້າງ ແລະ ຄັດເລືອກຍີ່ຫໍ້ຜະລິດຕະພັນກະສິກຳເພື່ອສຸຂະພາບຈຳນວນໜຶ່ງໃຫ້ກາຍເປັນລະບົບອຸດສາຫະກຳ, ເພີ່ມທະວີການຮ່ວມມື ແລະ ການພັດທະນາກັບບັນດາປະເທດອາຊຽນ. ດັ່ງນັ້ນ, ກະສິກຳເພື່ອສຸຂະພາບຈະໄດ້ຮັບການພັດທະນາໃຫ້ມີການເຊື່ອມຕໍ່ລະຫວ່າງ ສປ. ຈີນ ກັບ ບັນດາປະເທດອາຊຽນ, ສາມາດຊຸກຍູ້ການພັດທະນາ **"ໜຶ່ງແລວທາງໜຶ່ງເສັ້ນທາງ"** ໃຫ້ໄວຂຶ້ນ.

**6. ເອກະສານອ້າງອີງ:**


[1]**Kang Min, 2020.** Development status and prospects of functional agriculture industry, modern agricultural technology.pp14.

[2] **Dai Jinghao, Liu Yongxian, Su Xinhui, etc. 2015.** Analysis on the development prospects of selenium-rich functional agricultural products in Guangxi. Agriculture and Technology.pp176-178.

[3] **Dai Jinghao, Liu Yongxian, Su Xinhui, etc.2018**. SWOT analysis of the development of selenium-rich agricultural industry in Guangxi under the background of functional agriculture. Journal of Agricultural Sciences. pp 85-90.

[4] **Zhao Qiguo, Yin Xuebin. 2016.** functional agriculture. Beijing: Science Press.

[5] China Functional Agriculture Industry Alliance [EB/OL].(2014-06-12)[2020-01-13].https://baike.so.com/doc/8854140-9179204.html.

[6] **Shi Meili. 2016.** Countermeasures and suggestions for the development of selenium-rich agriculture in Guangxi. Rural Economy and Technology. pp 175-176.

[7] **FuXuan. 2020.** Discussion on existing problems and countermeasures in cross-border agricultural cooperation between China and ASEAN under the background of "One Belt and One Road".



ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສີມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;